ບົດລາຍງານການດຳເນີນທຸລະກິດປະຈຳປີ 2018

ຂອງບໍລິສັດຊິມັງລາວມະຫາຊົນ

1.ສະພາບການດຳເນີນທຸລະກິດປະຈຳປີ 2018

(1) ສາມາດຜ່ານຜ່າຕໍ່ຄວາມທຸກຍາກຂອງການແຂ່ງຂັນໃນຕະຫຼາດ, ສືບຕໍ່ຮັກສາຜົນກຳໄລ. ໃນປີ 2018 ເນື່ອງຈາກວ່າ ໄດ້ຮັບຜົນກະທົບຈາກ ລາຄາລົງຂອງຊິມັງ, ຈຶ່ງເຮັດໃຫ້ປະລິມານການຈຳໜ່າຍ ແລະ ລາຄາຂອງຊິມັງ ກໍ່ຫຼຸດລົງໄປຕາມ, ຜົນກຳໄລຫຼຸດໜ້ອຍ. ໃນປີ 2018 ສະເລ່ຍລວມກັນແລ້ວມູນຄ່າຈຳໜ່າຍ ຊິມັງປະຈຳປີ ແມ່ນ 1,9 ແສນໂຕນ. ລວມແລ້ວລາຍຮັບຈາກການດຳເນີນກິດຈະການລວມ ແມ່ນ 9.740.000.000 ກີບ, ທຽບເທົ່າ ກັບ 11,41 ລ້ານໂດລາສະຫະລັດ. ມູນຄ່າກຳໄລລວມທີ່ບັນລຸແມ່ນ 570.000.000 ກີບ, ທຽບເທົ່າກັບ 6,6 ໝື່ນ ໂດລາສະຫະລັດ.

(2)ບໍລິສັດ ບັນລຸເປົ້າໝາຍໃນການລົງທະບຽນຕະຫຼາດຫຼັກຊັບ. ໃນວັນທີ 2 ມີນາ 2018 ບໍລິສັດ ໄດ້ ລົງທະບຽນຫຼັກຊັບທີ່ ຕະຫຼາດຫຼັກຊັບລາວ ຢ່າງເປັນທາງການຮຸ້ນໃໝ່ທີ່ອອກຄັ້ງທຳອິດແມ່ນ 12 ລ້ານຮຸ້ນ, ທຽບ ເທົ່າກັບ 3,47 ລ້ານໂດລາສະຫະລັດ. ກາຍເປັນວິສະຫະກິດລົງທະບຽນຕະຫຼາດຫຼັກຊັບ ບໍລິສັດທີ 7 ໃນຕະຫຼາດ ຫຼັກຊັບລາວ, ເປັນວິສາຫະກິດຂອງຈີນທຳອິດທີ່ລົງທະບຽນຕະຫຼາດຫຼັກຊັບໃນລາວ.

(3)ປັບປຸງດ້ານເຕັກນິກຂອງໂຄງການກໍ່ສ້າງ. ເງິນລະດົມທຶນຈາກການຂາຍຮຸ້ນແມ່ນນຳໃຊ້ ເຂົ້າໃນການ ປັບປຸງ ເຕັກນິກຂອງໂຮງງານເປັນຫລັກ ເຊັ່ນ: ໂຄງການປັບປຸງພະລັງງານປ່ຽນແປງຄວາມຖີ່ແຮງດັນສູງໄລຍະທີໜຶ່ງ ປະຈຸບັນແມ່ນສຳເລັດໃນການລົງທຶນ ແລະ ດຳເນີນງານແລ້ວ, ສາມາດຫລຸດປະລິມານໄຟຟ້າລົງຂອງຈັກບົດອັດຖຸ ດິບ 38.7%,ແລະຫລຸດປະລິມານໄຟຟ້າລົງຂອງຈັກບົດຊິມັງແມ່ນ 20.7%; ໃນໄລຍະທີ 2 ກ່ອນລະດູຝົນໃນປີ 2019 ສຳເລັດໃນໂຄງການປັບປຸງສາງເກັບມ້ຽນກະລິງເກົ້.ເພື່ອສາມາດຍົກສູງດ້ານຄຸນນະພາບແລະປະສິດທິຜົນໄດ້ ສຳເລັດ.

(4)ໂຄງການພັດທະນາຊັບພະຍາກອນເຫັນປະສິດຕິຜົນໃນເບື້ອງຕົ້ນ. ດຳເນີນການພັດທະນາແບບກວມ ລວມ ໂດຍຮູບແບບຮ່ວມທຶນພັດທະນາບໍ່ຫີນປູນຂອງໂຮງງານ, ປະຈຸບັນສຳເລັດສາຍການຜະລິດຫີນເມັດ, ເຮັດໃຫ້ ຕົ້ນທຶນວັດຖຸດິບຫີນປູນທີ່ປ້ອນເຂົ້າໂຮງງານນັ້ນຕ່ຳລົງເຖິງ 10%, ປະຈຸບັນແມ່ນເລີ້ມຈຳໜ່າຍຫີນເມັດສູ່ຕະຫລາດ ພາຍນອກເປັນທີ່ຮຽບຮ້ອຍ.

(5)ຄວບຄຸມໜີ້ຕ້ອງຮັບ(Receivables) ແລະ ອັດຕາສ່ວນໜີ້ສິນຂອງຊັບສິນ ຢ່າງເໝາະສົມ. ຖ້າສົບທຽບກັບປີທີ່ຜ່ານມາ ຄືໃນທ້າຍປີ 2018 ມູນຄ່າໜີ້ຕ້ອງຮັບແມ່ນຫຼຸດລົງ ປະມານ 12%; ອັດຕາສ່ວນໜີ້ສິນຂອງຊັບສິນ ຫຼຸດລົງເຖິງ 31%. ຄວາມສ່ຽງທາງການເງິນແມ່ນຕ່ຳ.

(6)ຮັບປະກັນຜົນປະໂຫຍດຂອງຜູ້ຖືຫຸ້ນແຕ່ລະຝ່າຍ. ໃນສົກປີນີ້ ໄດ້ມີການແບ່ງຜົນກຳໄລ ໃຫ້ແກ່ແຕ່ລະຜູ້ຖືຫຸ້ນ ແລະ ສົ່ງເງິນຄືນແລ້ວທັງໝົດ 4 ແສນໂດລາສະຫະລັດ. ໃນນັ້ນ: ຫຼັງຈາກທີ່ບໍລິສັດຈົດທະບຽນຕະຫຼາດຫຼັກຊັບສາມເດືອນຜ່ານໄປ ຈຶ່ງຈະມີການແບ່ງຜົນກຳໄລໃຫ້ແກ່ ບັນດາຜູ້ຖືຫຸ້ນ ມູນຄ່າ 3,05 ແສນໂດລາສະຫະລັດ.

(7)ນັບຈາກທີ່ ໄດ້ຮັບສິດໃນການສຳຫຼວດແຮ່ຫ່ານຫີນ ທີ່ເລື່ອນເວລາໄປອີກໜຶ່ງປີ, ວຽກງານການຊີເຈາະຫ່ານຫີນຢູ່ເຂດພື້ນທີ່ສຳປະທານແມ່ນສຳເລັດໝົດທຸກຢ່າງ, ໃນຫຼາຍໆຮູຂຸມເຈາະແມ່ນໄດ້ພົບເຫັນ ຊັ້ນຫ່ານຫີນທີ່ມີຄຸນຄ່າ. ປະຈຸບັນ ແມ່ນກຳລັງຮຽບຮຽງບົດລາຍງານການສຳຫລວດໃຫແກ່ກະຊວງທີ່ກ່ຽວຂ້ອງ.

(8)ດຳເນີນການບໍລິຫານຄຸ້ມຄອງພາຍໃນທີ່ກຳນົດອີກບາດກ້າວໜຶ່ງເພື່ອໃຫ້ໄດ້ມາດຕະຖານ,ໄດ້ສຳເລັດວຽກງານຮັບຮອງລະບົບບໍລິຫານຄຸ້ມຄອງຄຸນນະພາບລະດັບສາກົນ ISO 9001 : 2015. ດຳເນີນການປັບປຸງ ແລະ ອັບເດດ ກົດລະບຽບບາງພາກສ່ວນໃຫ້ສົມບູນຂຶ້ນ. ສົ່ງເສີມການປະຕິຮູບອົງການຈັດຕັ້ງ ແລະ ຍຸບພະແນກການໜຶ່ງໃນໂຮງງານເຂົ້າກັບພະແນກທີ່ກ່ຽວຂ້ອງ.

(9)ຈັດຕັ້ງ ສົ່ງເສີມ ການຝຶກອົບຮົມໃຫ້ແກ່ພະນັກງານຈີນ ແລະ ພະນັກງານລາວ. ດຳເນີນການຝຶກອົບຮົມສະເພາະ ໃນດ້ານຄຸນນະພາບ, ຄວາມປອດໄພ ແລະ ຮັກສາສິ່ງແວດລ້ອມ, ສຳເລັດການ ຝຶກອົບຮົມດ້ານການບໍລິຫານຄຸ້ມຄອງ ແລະ ເຕັກນິກປະເພດຕ່າງໆ ໃຫ້ແກ່ພະນັກງານລວມແລ້ວທັງໝົດ 200 ກວ່າເທື່ອຄົນ.

(10)ບັນລຸບໍ່ເກີດອຸບັດຕິເຫດ ແລະ ບັນລຸການຮັກສາສິ່ງແວດລ້ອມທີ່ມີຄວາມປອດໄພ ພາຍໃນປີ. ຫ້າວຫັນ ປະຕິບັດໜ້າທີ່ທາງສັງຄົມ, ຕອບທຸກບັນຫາໃຫ້ມວນຊົນທ້ອງຖິ່ນ, ຊ່ວຍເຫຼືອ ດ້ານການສ້ອມແປງເສັ້ນທາງ ສ້ອມແປງຂົວໃຫ້ແກ່ບ້ານບໍລິເວນໃກ້ຄຽງ; ໃນຊ່ວງການເກີດໄພພິບັດທາງທຳມະຊາດ ໃນເດືອນກໍລະກົດ ທີ່ພາກໃຕ້ຂອງລາວ ກໍ່ໄດ້ມີການບໍລິຈາກຊ່ວຍເຫຼືອ ຢ່າງຈິງຈັງ.

2.ແຜນວຽກງານສຳຄັນໃນປີ 2019

ວຽກງານສຳຄັນໃນປີ 2019 ນີ້ ແມ່ນມີທັງໝົດ 6 ດ້ານຄື:

(1) ເພີ່ມຄວາມເຂັ້ມແຂງດ້ານວຽກງານການຈຳໜ່າຍ. ພາຍໃນສະພາບການແຂ່ງຂັນທາງຕະຫຼາດທີ່ດຸເດືອດ, ນອກຈາກຈະເຮັດວຽກ ການສະໜອງໃຫ້ແກ່ ໂຄງການເສັ້ນທາງລົດໄຟ ລາວ-ຈີນ ແລະ ທາງດ່ວນນະຄອນຫຼວງວຽງຈັນ-ວັງວຽງແລ້ວ, ຍັງຕ້ອງໄດ້ກຳແໜ້ນວຽກງານຈຳໜ່າຍ ໃຫ້ແກ່ລູກຄ້າຂະໜາດນ້ອຍ, ຂະໜາດກາງ, ເຮັດໃຫ້ ຜະລິດຕະພັນຂອງພວກເຮົາ ສາມາດເຂົ້າເຖິງ ລູກຄ້າເປັນພັນເປັນໝື່ນຄົນ.

(2) ປັບປຸງເຕັກນິກໃຫ້ດີຂຶ້ນເລື້ອຍໆ, ເພື່ອຮັບປະກັນຄຸນນະພາບ ຜະລິດຕະພັນຊີມັງກາ"ກະທິງທອງ" ແລະ ລະດັບການບໍລິການໃນຕະຫຼາດຊີມັງລາວໃຫ້ເປັນທີ່ໜຶ່ງ.

(3) ສືບຕໍ່ ປະຕິບັດ ແລະ ປັບປຸງທາງດ້ານເຕັກນິກ, ຫຼຸດຜ່ອນປະລິມານການສິ້ນເປືອງທຸກຢ່າງ, ຄວບຄຸມ ຕົ້ນທຶນ.

(4) ເລັ່ງການປ່ຽນແປງສູ່ການພັດທະນາ. ອັນທີໜຶ່ງແມ່ນຂະຫຍາຍການຂາຍ ຜະລິດຕະພັນຫີນເມັດທີ່ຜ່ານ ການປຸງແຕ່ງຈຳໜ່າຍສູ່ພາຍນອກ, ເພື່ອເພີ່ມຜົນປະໂຫຍດລາຍໄດ້. ອັນທີສອງແມ່ນ ຮັບປະກັນ ແລະ ສົ່ງເສີມການ ຂຸດຄົ້ນບໍ່ຖ່ານຫີນ, ຍາດແຍ່ງ ແລະ ເລັ່ງການຂຸດຄົ້ນໃຫ້ໂດຍໄວ, ຫຼຸດຜ່ອນຕົ້ນທຶນ ໃນການນຳໃຊ້ຖ່ານຫີນ.

(5)ສືບຕໍ່ສົ່ງເສີມການປະຕິຮູບພາຍໃນ, ຫຼຸດຈຳນວນພະນັກງານໃຫ້ໄດ້ຢ່າງມີປະສິດຕິພາບ.

(6)ຮັບປະກັນ ບໍ່ໃຫ້ເກີດອຸບັດຕິເຫດຄວາມປອດໄພແລະຮັກສາສິ່ງແວດລ້ອມ.ປະຕິບັດໜ້າທີ່ທາງສັງຄົມ.

ເນື້ອໃນທັງໝົດ ຂ້າງເທິງ ແມ່ນເນື້ອໃນການລາຍງານຂອງຂ້າພະເຈົ້າ. ຂໍກະລຸນາ ໃຫ້ຜູ້ຖືຫຸ້ນແຕ່ລະທ່ານ ຈົ່ງ ໄດ້ປະເມີນ ແລະ ໃຫ້ຄຳຄິດເຫັນດ້ວຍ.

ນະຄອນຫຼວງວຽງຈັນ, ວັນທີ 30 APR 2019

ບໍລິສັດ ຊີມັງລາວ ມະຫາຊົນ

ກະຊວງ ແຜ່ນ ການເງິນ
ຊີມັງລາວ ມະຫາຊົນ
Lao Cement Public Company
ນະຄອນ ຫຼວງ ວຽງຈັນ